ບົດລາຍງານການດຳເນີນທຸລະກິດ 6 ເດືອນຕົ້ນປີ 2026
ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

I. ບົດລາຍງານຂອງບໍລິສັດ

1. ສະພາບຄວາມເປັນມາກ່ຽວກັບທຸລະກິດຂອງບໍລິສັດ:

ບໍລິສັດ ຊີມັ່ງລາວ ມະຫາຊົນ (ບຊລ ຫຼື LCC) ໄດ້ປ່ຽນສະຖານະມາຈາກ ບໍລິສັດ ຊີມັ່ງລາວ ຈຳກັດ ໃນ ເມື່ອກ່ອນ ໄດ້ຖືກສ້າງຕັ້ງຂຶ້ນໃນປີ 1998 ໂດຍການຮ່ວມມືຂອງບໍລິສັດ ຮ່ວມມືສາກົນດ້ານເສດຖະກິດ ເຕັກນິກຢຸນ ນານ (CYC) ແຫ່ງ ສ.ປ.ຈີນ ແລະລັດວິສາຫະກິດ ພັດທະນາກະສິກຳອຸດສາຫະກຳ ແລະ ບໍລິການຂາອອກ - ຂາເຂົ້າ (DAI) ຂອງ ສ.ປ.ປ.ລາວ, ໃນອັດຕາສ່ວນການລົງທຶນ 60% (CYC) ແລະ DAI 40% ດ້ວຍທຶນຈົດທະບຽນໃນເບື້ອງຕົ້ນ 1,100,000 ໂດລາສະຫະລັດ, ໂດຍຈຸດປະສົງຫຼັກ ເພື່ອສ້າງ ໂຮງງານຜະລິດ ແລະຈຳໜ່າຍຊີມັ່ງທົດແທນການນຳເຂົ້າ, ໂດຍໄດ້ຮັບເງິນກູ້ຢືມຈາກ ລັດຖະບານຈີນ ຈຳນວນ 269,612,040 ຢວນ (ສະກຸນເງິນຈີນ), ຊຶ່ງໃນເວລານັ້ນທຽບເທົ່າ 32,561,841 $ (ໂດລາສະຫະລັດ), ຊຶ່ງມາຮອດທ້າຍປີ 2014 ທາງບໍລິສັດ ໄດ້ສຳເລັດການຊຳລະຕົ້ນທຶນ ແລະດອກເບ້ຍເງິນກູ້ຢືມດັ່ງກ່າວທັງໝົດແລ້ວ.

ບໍລິສັດໄດ້ເລີ່ມກໍ່ສ້າງໂຮງງານຊີມັ່ງວັງວຽງ ຫຼັງ II ໃນວັນທີ 26 /12/1999 ແລະສາມາດດຳເນີນການ ຜະລິດ ຢ່າງເປັນທາງການໃນວັນທີ 22/03/2002 ແລະໄດ້ສືບຕໍ່ທຳການຜະລິດ ແລະຈຳໜ່າຍຊີມັ່ງການກະທິງ ທອງ ຕາມມາດຕະຖານອະເມລິກາ ASTM-C-150, ມາດຕະຖານແຫ່ງຊາດ ສ.ປ.ຈີນ GB-175:2007, ຊຶ່ງມີຜະລິດຕະພັນ 03 ປະເພດຄື: ຊີມັ່ງການກະທິງທອງແດງ, ກະທິງທອງຟ້າ ແລະກະທິງທອງຂຽວ. ການ ຜະລິດຊີມັ່ງຂອງບໍລິສັດ ໄດ້ນຳໃຊ້ວັດຖຸດິບພາຍໃນທັງໝົດ ເປັນຕົ້ນແມ່ນຫີນປູນ, ດິນໜຽວ, ຊາຍພູ, ຫີນ ກາວ ແລະຖ່ານຫີນ.

ມາຮອດປີ 2013 ລັດຖະບານ ສ.ປ.ປ.ລາວ ໄດ້ປັບປຸງອັດຕາການຖືຮຸ້ນຂອງບໍລິສັດຄືນໃໝ່ຄື: ບໍລິສັດ ຮ່ວມມືສາກົນດ້ານເສດຖະກິດ ເຕັກນິກຢຸນນານ (CYC) ຖືຮຸ້ນ 51% ແລະລັດວິສາຫະກິດ ພັດທະນາກະສິກຳ ອຸດສາຫະກຳ ແລະບໍລິການຂາອອກ - ຂາເຂົ້າ (DAI) ຖືຮຸ້ນ 49%, ມາຮອດປະຈຸບັນ ຫຼັງຈາກໄດ້ປ່ຽນສະຖານະເປັນ ບໍລິສັດມະຫາຊົນ ແລະຈົດທະບຽນໃນຕະຫຼາດຫຼັກຊັບລາວ ໃນວັນທີ 02/03/2018 ອັດຕາການຖືຮຸ້ນປ່ຽນມາເປັນ UQNT ຖືຮຸ້ນ 35,6964%, DAI ຖືຮຸ້ນ 34,2966%, ຂາ ຮຸ້ນຜູ້ກໍ່ຕັ້ງບໍລິສັດ 0,007% ແລະມວນຊົນທົ່ວໄປ 30%.

✡. ຂໍ້ມູນທົ່ວໄປຂອງບໍລິສັດ

- ຊື່ບໍລິສັດ: ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

- ສຳນັກງານຕັ້ງຢູ່: ບ້ານໂພນພະເນົາ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ໂທລະສັບ 021 451116 ແຟັກ: 021 451117
- ທຶນຈົດທະບຽນ 20,002,000,000 ກີບ

* ວິໃສທັດ ແລະ ພາລະກິດ:

1. ວິໃສທັດ:

- ສ້າງບໍລິສັດໃຫ້ກາຍເປັນບໍລິສັດທ່ອງທ່ຽວ ແລະວັດທະນະທຳແບບຄົບວົງຈອນ.

- ສ້າງໃຫ້ເປັນບໍລິສັດທີ່ມີການຜະລິດປອດໄພໃສ່ໃຈຄຸນນະພາບ ເປັນມິດກັບສິ່ງແວດລ້ອມ, ພ້ອພັນຄູ່ຮ່ວມມືບົນພື້ນຖານຄວາມສະເໝີພາບ, ຕ່າງຝ່າຍມີຜົນປະໂຫຍດ ແລະພັດທະນາອຸດສາຫະ ກຳແບບຍືນຍົງ.

2. ພາລະກິດ:

* ຮັບປະກັນການບໍລິການໃຫ້ລູກຄ້າມີຄວາມເພິ່ງພໍໃຈ.
* ສ້າງເງື່ອນໄຂ ຫຼຸດຜ່ອນຕົ້ນທຶນຜະລິດ - ຈຳໜ່າຍ, ເພີ່ມປະສິດທິຜົນຂອງທຸລະກິດ.
* ພັດທະນາບຸກຄະລາກອນດ້ານເຕັກນິກ-ອຸດສາຫະກຳ ຂອງບໍລິສັດໃຫ້ກາຍເປັນຊ່ຽວຊານໃນອະ ນາ ຄົດ.

II. ສະພາບການດຳເນີນທຸລະກິດ 6 ເດືອນຕົ້ນປີ 2026

ໃນ 6 ເດືອນຕົ້ນປີ 2026 ບໍລິສັດໄດ້ດຳເນີນວຽກງານຕ່າງໆຕາມແຜນການ ແລະ ມີຄວາມຄືບໜ້າເປັນ ຢ່າງດີ ຄືດັ່ງນີ້:

1. ໂຄງການກໍ່ສ້າງອາຄານ ວັດທະນະທຳ-ທ່ອງທ່ຽວ

ອາຄານວັດທະນະທຳ-ທ່ອງທ່ຽວ ຕັ້ງຢູ່ບ້ານໂພນະເນົາ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ເປັນ ຕຶກອາຄານທີ່ກວມເອົາໂຮງແຮມ, ຄອນໂດ ແລະ ຫ້ອງການເປັນອັນໜຶ່ງອັນດຽວກັນ, ໂຄງການນີ້ ໄດ້ຈັດພິທີ ວາງສີລາລຶກໃນວັນທີ 25/04/2023 ແລະ ເດືອນ 10 ປີ 2025 ໄດ້ສຳເລັດໂຄງສ້າງຕຶກໂຕສຳຄັນ, ຈົນຮອດ ຫ້ກເດືອນຕົ້ນປີ 2026, ການຕົບແຕ່ງຝ່າດ້ານນອກໄດ້ສຳເລັດ 30%, ການຕົບແຕ່ງພາຍໃນຊັ້ນທີ 2 ກັບ ຊັ້ນ ທີ 13 ສຳເລັດໝົດແລ້ວ, ການຕົບແຕ່ງພາຍໃນຊັ້ນທີ 11-20 ສຳເລັດປະມານ 70%, ຊັ້ນທີ 3-4 ສຳເລັດ ປະມານ 50%, ຊັ້ນທີ 1 ສຳເລັດປະມານ 70%.

2. ໂຄງການກໍ່ສ້າງເຂດສາທິດເສດຖະກິດ-ອຸດສາຫະກຳທ່ອງທ່ຽວວັດທະນະທຳ ຢູ່ເຂດ ເມືອງວັງວຽງ

ໂຄງການນີ້ຕັ້ງຢູ່ບ້ານຂັນໝາກ ເມືອງວັງວຽງ ແຂວງວຽງຈັນ, ມີເນື້ອທີ່ທັງໝົດ 594 ເຮັກຕາ ລວມເຂດ ພື້ນທີ່ຂອງໂຮງງານຊີມັງວັງວຽງ ຫຼັງ 1 ກັບ ຫຼັງ 2, ໄດ້ຈັດພິທີວາງສີລາລຶກໃນວັນທີ 12/01/2024, ມາ ຮອດປັດຈຸບັນ ໄດ້ສຳເລັດແຜນການລວມ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງ ແວດລ້ອມ ແລະ ໄດ້ຮັບຮອງຜ່ານກະຊວງວັດທະນະທຳ ແລະ ທ່ອງທ່ຽວ ແລະ ແຂວງວຽງຈັນ, ນອກຈາກນີ້ , ໄດ້ຮັບໃບຢັ້ງຢືນການສຳຫຼວດ-ວັດແທກທີ່ດິນຈາກແຂວງວຽງຈັນ ເຊິ່ງມີເນື້ອທີ່ດິນທັງໝົດ 1.981.314 ຕາແມັດ ສ່ວນຕອນດິນທີ່ເຫຼືອກຳລັງດຳເນີນໃບຢັ້ງຢືນການສຳຫຼວດ-ວັດແທກທີ່ດິນຢູ່.

3. ໂຄງການກໍ່ສ້າງເຂດອິສອດສາກົນ ໜອງສີຟ້າດອງຈັນ ວັງວຽງ (ສູນຝຶກອົບຮົມວັງວຽງ ກະຊວງປ້ອງກັນປະເທດ)

ໂຄງການນີ້ຕັ້ງຢູ່ບ້ານໂພນຊ, ເມືອງວັງວຽງ, ແຂວງວຽງຈັນ ກວມເນື້ອທີ່ປະມານ 185.621 ຕາແມັດ ໄດ້ຈັດພິທີວາງສິລາລຶກໃນວັນທີ 12/01/2024 ຄືກັນ, ປີ 2025 ໄດ້ເລີ່ມກໍ່ສ້າງເບື້ອງຕົ້ນ ເຊັ່ນ : ລະບົບໄຟຟ້າ, ລະບົບນ້ຳ ແລະ ສ້ອມແປງເສັ້ນທາງຕ່າງໆ, ຈົນຮອດເດືອນ ເມສາ 2026 ໄດ້ສຳເລັດການກໍ່ສ້າງເສັ້ນທາງ, ປ້າຍາມ, ເຮັດສີປະຕູໂຂງຂອງໂຄງການ, ປ້າຍໂຄສະນາ ແລະອື່ນໆ.

4. ໂຄງການກໍ່ສ້າງຕະຫຼາດຈຳໜ່າຍເຄື່ອງອາໄຫລ່ກົນຈັກກະສິກຳ

ໂຄງການນີ້ຕັ້ງຢູ່ບ້ານໂນນຂີ້ເຫຼັກ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ເປັນກຸ່ມສິ່ງປຸກສ້າງທີ່ໄດ້ກວເອົາການຄ້າ, ທີ່ພັກ, ໂຮງແຮມ ແລະ ຫ້ອງການຢູ່ເຂດດຽວກັນ, ໄດ້ຈັດພິທີວາງສິລາລຶກໃນວັນທີ 04/04/2024, ຈົນຮອດ ເດືອນ ເມສາ 2026 ຕຶກເບີ 3 “ ຄອນໂດອັດທະຍະທຳ-ທ່ອງທ່ຽວ ” ໄດ້ສຳເລັດການມອບສົ່ງໂຄງການແລ້ວ, ເປັນຕຶກມີ 4 ຊັ້ນ ມີເນື້ອທີ່ 602,88 ຕາແມັດ, ຊັ້ນທີ 1 ເປັນຮ້ານຂາຍເຄື່ອງ, ຊັ້ນທີ 2-4 ເປັນຫ້ອງຄອນໂດ, ມີເນື້ອທີ່ການກໍ່ສ້າງ 2723,84 ຕາແມັດ.

5. ໂຄງການກໍ່ສ້າງຫໍພັກພະນັກງານຂອງກຸ່ມບໍລິສັດ ທ່ອງທ່ຽວ ອັດທະນະທຳລາວ ມະ ຫາ ຊົນ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ບ້ານໂນນສະຫວ່າງ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ, ກວມເນື້ອທີ່ 1185 ຕາແມັດ ເປັນຕຶກ 3 ຊັ້ນ ມີຫ້ອງນອນທັງໝົດ 17 ຫ້ອງ, ໄດ້ສຳເລັດການກໍ່ສ້າງໂຄງສ້າງຕຶກປະມານ 90% ແລະ ການຕົບແຕ່ງພາຍໃນຈຳນວນໜຶ່ງ.

6. ໂຄງການກໍ່ສ້າງພະພຸດທະຮູບຢູ່ຈອມພູຜາບົວ

ໂຄງການກໍ່ສ້າງແຫ່ງນີ້ ຕັ້ງຢູ່ຈອມພູຜາບົວ ບ້ານນາຄູນ ເມືອງວັງວຽງ ແຂວງວຽງຈັນ, ກວມເນື້ອທີ່ 1.087.759 ຕາແມັດ ຫ່າງຈາກເຂດສາທິດເສດຖະກິດ-ອຸດສາຫະກຳທ່ອງທ່ຽວວັດທະນະທຳ ວັງວຽງ ປະມານ 12 ກິໂລແມັດ, ແຜນການອອກແບບໄດ້ສຳເລັດແລ້ວ. ໃນປີ 2025 ສະເໜີສ້າງຕັ້ງມູນນິທິພະພຸດທະຮູບພູຜາບົວ ແລະ ໄດ້ຮັບການອະນຸມັດຈາກຄະນະຈັດຕັ້ງສູນກາງພັກ ໃນວັນທີ 03/04/2026 ເຊິ່ງເປັນການຮັດປະກັນໃນການສະໜອງເງິນທຶນໃຫ້ແກ່ການກໍ່ສ້າງໂຄງການ. ປີ 2025 ໄດ້ສຳເລັດວຽກງານການສຳຫຼວດ ແລະ ເດືອນ 1 ປີ 2026 ເລີ່ມກໍ່ສ້າງເສັ້ນທາງ ມາຮອດປັດຈຸບັນນີ້ ເສັ້ນທາງຂຶ້ນໄປເທິງຈອມພູໄດ້ສຳເລັດແລ້ວ. ຕາມທີ່ໄດ້ປຶກສາກັນກັບສະມາຄົມສາສະໜາພຸດ ກຳນົດເອົາວັນທີ 28/08/2026 ເປັນມື້ຈັດພິທີຖະແຫຼງຂ່າວປະກາດການສ້າງຕັ້ງມູນນິທິພະພຸດທະຮູບພູຜາບົວ.

7. ໂຄງການກໍ່ສ້າງສະໜາມຫັດແອບຄົບວົງຈອນ 12 ກຸມພາ

ໂຄງການນີ້ ຕັ້ງຢູ່ພາກຕາເວັກອອກສຽງເໜືອຂອງເມືອງວັງວຽງ ແຂວງວຽງຈັນ, ຫ່າງຈາກໃຈກາງຕົວເມືອງ 5,73 ກິໂລແມັດ, ມີເນື້ອທີ່ທັງໝົດ 90 ເຮັກຕາ, ການກໍ່ສ້າງໄລຍະທີ 1 ນຳໃຊ້ເນື້ອທີ່ 30 ເຮັກຕາ, ໄລຍະທີ 1 ຈົ່ງໄວ້ລ່ວງໜ້າ 60 ເຮັກຕາ, ເປັນໂຄງການສະໜາມຫັດແອບຄົບວົງຈອນທີ່ຮ່ວມມືກັບກອງພົນທະຫານຮາບທີ 1, ໄດ້ເຊັນບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືກໍ່ສ້າງສະໜາມຫັດແອບກັບກອງພົນທະຫານຮາບທີ 1 ໃນວັນທີ 29/07/2026, ກຳລັງດຳເນີນການອອກແບບ ແລະ ວາງແຜນການ

ລວມໃຫ້ແກ່ໂຄງການ.

8. ວຽກງານດ້ານບໍ່ແຮ່

ວັນທີ 03/06/2024 ບໍລິສັດໄດ້ເຊັນສັນຍາການຮ່ວມມືພັດທະນາດ້ານຂົງເຂດບໍ່ແຮ່ຢູ່ແຂວງຫົວພັນ ເນື້ອທີ່ 131,92 ຕາແມັດ ກັບບໍລິສັດ ລັດພັດທະນາຊົນນະບົດ ກະຊວງປ້ອງກັນປະເທດ, ຫຼັງຈາກນັ້ນ ໄດ້ຍື່ນເອກະສານສະເໜີຂໍນຳລັດຖະບານຕາມຂັ້ນຕອນ, ຮອດປັດຈຸບັນນີ້, ກຳລັງລໍຖ້າລັດຖະບານເຊັນສັນຍາສຳປະທານກັບກະຊວງປ້ອງກັນປະເທດ, ນອກຈາກນີ້, ທັງສອງຝ່າຍເຫັນດີຈະຮ່ວມມືກັນພັດທະນາທີ່ດິນຂອງບໍລິສັດ ລັດພັດທະນາຊົນນະບົດ ເພື່ອກໍ່ສ້າງຕຶກໃໝ່ ສ່ວນແຜນການອອກແບບ ແລະ ວຽກການສຳຫຼວດຂອງໂຄງການໄດ້ສຳເລັດແລ້ວ ຫຼັງຈາກໄດ້ຮັບອະນຸມັດແລ້ວຈະເລີ່ມການກໍ່ສ້າງ.

9. ໂຄງການກໍ່ສ້າງເຂດສອນອຸດສາຫະກຳເບົາທີ່ຕັ້ງຢູ່ເຂດຫຼັກຊາວ ແລະ ໂຄງການກໍ່ສ້າງໂຮງງານຢາສູບ

ໂຄງການກໍ່ສ້າງໂຮງງານຢາສູບແມ່ນພາກສ່ວນຫຼັກທີ່ເປັນເສົາຄ້ຳຂອງເຂດສອນອຸດສາຫະກຳເບົາທີ່ຕັ້ງຢູ່ເຂດຫຼັກຊາວ ແຂວງບໍລິຄຳໄຊ (ຕໍ່ໄປນີ້ເອີ້ນວ່າ " ເຂດສອນອຸດສາຫະກຳ "), ອີງໃສ່ແຜນການລວມຂອງເຂດສອນອຸດສາຫະກຳດ້ວຍພື້ນທີ່ 100 ເຮັກຕາ ແລະ ພື້ນຖານໂຄງລ່າງ (ລົງທຶນ 10 ລ້ານໂດລາສະຫະລັດ ໂດຍກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳລາວ ມະຫາຊົນ), ໂດຍການນຳພາຂອງ ບໍລິສັດ ຟາສະຕາ ໂຕແບກ ໂຄ ການຄ້າ ຈຳກັດ, ກໍ່ສ້າງໂຮງງານຜະລິດຢາສູບມ້ວນທັນສະໄໝທີ່ມີກຳລັງການຜະລິດ 500,000 ຕູ້ໃຫຍ່ຕໍ່ປີ, ພ້ອມທັງດຶງດູດເອົາວິສາຫະກິດສະໜັບສະໜູນປະກອບເປັນຊຸດເຊັ່ນ: ການອົບແຫ້ງໃບຢາສູບ, ການຫຸ້ມຫໍ່ພິມກ່ອງ, ການຜະລິດກົ້ນກອງຢາສູບ, ການປຸງແຕ່ງນ້ຳຫອມທາດຫອມເຂົ້າມາ, ເພື່ອສ້າງເປັນລະບົບຕ່ອງໂສ້ອຸດສາຫະກຳຢາສູບມ້ວນແບບຄົບວົງຈອນແຫ່ງທຳອິດຂອງແຫຼມອິນດູຈີນ. ໂຄງການວາງແຜນໃຊ້ພື້ນທີ່ 10 ເຮັກຕາ, ຕັ້ງຢູ່ໃນເຂດອຸດສາຫະກຳຢາສູບຂອງເຂດສອນອຸດສາຫະກຳເບົາ. ການກໍ່ສ້າງປະກອບມີ: ໂຮງງານຜະລິດຢາສູບມ້ວນອັດສະລິຍະທັນສະໄໝ, ສາງບົ່ມໃບຢາສູບ ແລະ ສູນປຸງແຕ່ງເບື້ອງຕົ້ນ, ເຂດສະໜັບສະໜູນປະກອບເປັນຊຸດ (ການພິມກ່ອງຢາສູບ, ວັດສະດຸຫຸ້ມຫໍ່, ກົ້ນກອງຢາສູບ, ການປຸງແຕ່ງນ້ຳຫອມ), ສາງປອດພາສີຂົນສົ່ງຂ້າມຊາຍແດນ ແລະ ສິ່ງຕິດຕັ້ງກວດກາຕິດຕາມພາສີ, ຫ້ອງການ, ທີ່ພັກອາໄສ ແລະ ສິ່ງຕິດຕັ້ງສາທາລະນະ.

ບົດລາຍງານການສຶກສາຄວາມເປັນໄປໄດ້ຂອງໂຄງການດັ່ງກ່າວໄດ້ສົ່ງໃຫ້ ບໍລິສັດ ລັດພັດທະນາຊົນນະບົດ ລໍຖ້າການຄົ້ວຄ້ວ ແລະ ພິຈາລະນາແລ້ວ

10. ການຮ່ວມມືຢ່າງຮອບດ້ານກັບກະຊວງ ວັດທະນະທຳ ແລະ ທ່ອງທ່ຽວ

ປີ 2025 ໄດ້ສະເໜີນຳກະຊວງ ວທ ເພື່ອໃຫ້ບໍລິສັດລູກ ຄື ບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ ມີສ່ວນຮ່ວມໃນວຽກການວາງແຜນ, ອອກແບບ, ໂຄສະນາ, ກໍ່ສ້າງ, ດຳເນີນງານຕໍ່ແຫຼ່ງທ່ອງທ່ຽວຕ່າງໆທີ່ຈົດທະບຽນໃນບັນຊີຂອງກະຊວງ ວທ, ຮ່ວມມືກັນກັບພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ວທ ສ້າງແຫຼ່ງທ່ອງທ່ຽວຕ່າງໆໃຫ້ກາຍເປັນແຫຼ່ງທ່ອງທ່ຽວທັນສະໄໝທີ່ມີສິ່ງອຳນວຍຄວາມສະດວກຄົບຖ້ວນ, ສົມບຸນ, ໄດ້ມາດຖະຖານ, ມີຄວາມປອດໄພ ແລະ ມີຄວາມເໝາະສົມໃນການທ່ອງທ່ຽວ ເຊິ່ງການສະເໜີດັ່ງກ່າວໄດ້ຮັບການເຫັນດີເປັນພື້ນຖານແລ້ວ, ທາງບໍລິສັດກຳໄດ້ກຽມແຜນວຽກ, ງົບປະມານ ແລະ ບຸກຄະລາກອນລະອຽດພ້ອມແລ້ວ ເພື່ອເຂົ້າຮ່ວມກອງປະຊຸມປຶກສາຫາລື

ທີ່ຈັດໂດຍພາກສ່ວນທີ່ກ່ຽວຂ້ອງຂອງກະຊວງ ວທ. ນອກຈາກນີ້, ທາງບໍລິສັດຍັງສະເໜີຂໍຮ່ວມກັນສ້າງ " ສູນຄຸ້ມຄອງ ແລະ ບໍລິການການທ່ອງທ່ຽວ ເມືອງວັງວຽງ " ໜັງສືສະເໜີກັບເອກະສານກ່ຽວຂ້ອງໄດ້ຍື່ນໃຫ້ ກະຊວງ ວທ ແລ້ວ.

II. ແຜນວຽກງານປະຈຳປີ 2026

ນອກຈາກຈະສືບຕໍ່ດຳເນີນໂຄງການທີ່ສະຫຼຸບຂ້າງເທິງນັ້ນໃຫ້ປະສົບຜົນສຳເລັດຕາມແຜນການທີ່ວາງ ໄວ້, ຍັງຈະຮ່ວມມືກັບ ກຸ່ມບໍລິສັດ ວັດທະນະທຳທ່ອງທ່ຽວ ສິບສອງພັນນາ ສປ ຈີນ ເພື່ອດຳເນີນກິດ ຈະ ການນຳທ່ຽວລະຫວ່າງປະເທດ, ສ້າງຊ່ອງທາງໃຫ້ຄົນລາວໄປທ່ຽວສິບສອງພັນນາ ແລະ ກວດສຸຂະພາບ, ໃຫ້ ຄົນຈີນມາທ່ຽວເມືອງລາວ. ພ້ອມກັນນັ້ນ, ບໍລິສັດຈະຕັ້ງໜ້າກະກຽມຟື້ນຟູການຊື້ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບ ຄືນໃໝ່.

III. ສະພາບການເງິນ

ລາຍລະອຽນແມ່ນຢູ່ໃນບົດລາຍງານການເງິນ 6 ເດືອນຕົ້ນປີ 2026 ຂອງບໍລິສັດ.

IV. ສະພາບການເປີດກອງປະຊຸມຜູ້ຖືຮຸ້ນ ແລະ ສະພາບໍລິຫານ

ຮອດວັນທີ 30/06/2026 ບໍລິສັດໄດ້ຈັດກອງປະຊຸມສາມັນຜູ້ຖືຮຸ້ນ 1 ຄັ້ງ, ກອງປະຊຸມສາມັນສະພາ ບໍລິຫານ 1 ຄັ້ງ ໄດ້ພິຈາລະນາ ແລະ ຮັບຮອງ ຂໍ້ສະເໜີພິຈາລະນາສຳຄັນຕ່າງໆຄືດັ່ງນີ້:

ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານການເງິນ ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ບົດລາຍງານການດຳເນີນທຸລະກິດ ປະຈຳປີ 2025 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ການສ້າງຕັ້ງບໍລິສັດ ບໍລິຫານ ແບຣນການເຟ ຈີແອລຊີ ຈຳກັດ

ສັນຍາຮັບເໝົາໂຄງການກໍ່ສ້າງພະພຸດທະຮູບພູຜາບ໋ວອ້ວງວຽງ

ການປ່ຽນຊື່ ບໍລິສັດ ບໍລິການວາງສະແດງສາກົນລາວ ຈຳກັດຜູ້ດຽວ

ການໂອນຮຸ້ນຂອງບໍລິສັດ ຟາສະຕາ ໂຕແບກໂຄ ການຄ້າ ຈຳກັດ

ການເພີ່ມທຶນຈົດທະບຽນ ແລະ ຂາຮຸ້ນຂອງບໍລິສັດ ສະຖາບັນແຜນການ ແລະ ການອອກແບບທ່ອງ ທ່ຽວແຫ່ງຊາດລາວ ຈຳກັດຜູ້ດຽວ

V. ຂໍ້ມູນພື້ນຖານສຳລັບຄະນະກຳມະການສະພາບໍລິຫານ ແລະ ພະນັກງານ

ຄະນະກຳມະການສະພາບໍລິຫານຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ປະກອບມີ 11 ທ່ານ, ຝ່າຍ ລາວ 4 ທ່ານ (ກຳມະການສະພາບໍລິຫານອິດສະຫຼະ 1 ທ່ານ), ຝ່າຍຈີນ 7 ທ່ານ (ກຳ ມະການສະພາບໍລິຫານອິດສະຫຼະ 2 ທ່ານ).

ຈີນຮອດວັນທີ 30/06/2026 ພະນັກງານຖາວອນຂອງບໍລິສັດມີ 25 ຄົນ, ສັນຍາບໍລິການ 13 ຄົນ. ຄະນະກຳມະການສະພາບໍລິຫານມີຂໍ້ມູນລະອຽດດັ່ງນີ້:

	ທ່ານ ເນ້ຍ ເຫຼີຍ 11/12/1971	ສັນຊາດ ຈີນ	ປະທານສະພາບໍລິຫານ
	ທ່ານ ອັນທອງ ສິດທິກຸນ 02/03/1960	ສັນຊາດລາວ	ຮອງປະທານສະພາບໍລິຫານ
	ທ່ານ ຫຼີ ຮ້າວ 01/12/1977	ສັນຊາດຈີນ	ກຳມະການສະພາບໍລິຫານຜູ້ອຳນວຍການໃຫຍ່
	ທ່ານ ຄຳບົນ ໄຊເລົ່າວົງ 15/02/1958	ສັນຊາດລາວ	ກຳມະການສະພາບໍລິຫານ ຮອງຜູ້ອຳນວຍການໃຫຍ່
	ທ່ານ ຈ່າງ ຈິ່ງຫົວ 26/11/1978	ສັນຊາດຈີນ	ກຳມະການສະພາບໍລິຫານ ຫົວໜ້າຝ່າຍການເງິນ
	ທ່ານ ສີນທະນູ ສົມຟອງບຸດຕະຂັນ 20/07/1971	ສັນຊາດລາວ	ກຳມະການສະພາບໍລິຫານ ຮອງຜູ້ອຳນວຍການໃຫຍ່
	ທ່ານ ນາງ ຊ້າຍ ລີງລີງ 10/10/1949	ສັນຊາດຈີນ	ກຳມະການສະພາບໍລິຫານ
	ທ່ານ ຕີ໋ງ ເຈີ໋ນຊູ້ 18/11/1973	ສັນຊາດຈີນ	ກຳມະການສະພາບໍລິຫານ

	ທ່ານ ໄຕ້ ຢອງຫົວ 3/7/1973	ສັນຊາດຈີນ	ກຳມະການສະພາບໍລິຫານ ອິດສະຫຼະ
	ທ່ານ ຫຼີ ເວີນຈູ້ 11/1973	ສັນຊາດຈີນ	ກຳມະການສະພາບໍລິຫານ ອິດສະຫຼະ
	ທ່ານ ວິຄຳແດງ ອິນທະໄຊ 15/08/1980	ສັນຊາດລາວ	ກຳມະການສະພາບໍລິຫານ ອິດສະຫຼະ

VI. ແຜນການປັນຜົນ

ເນື່ອງຈາກວ່າ ບໍລິສັດຍັງນອນຢູ່ໃນໄລຍະເວລາປັບປຸງຟື້ນຟູ ແລະ ຫັນຮູບແບບທຸລະກິດ ບໍ່ທັນມີກຳໄລສາມາດປັນຜົນໃຫ້ແກ່ບັນດາຜູ້ຖືຮຸ້ນ, ສະນັ້ນ, ຈຶ່ງບໍ່ມີແຜນການປັນຜົນສຳລັບ ປີ 2026.

VII. ວຽກງານສຳຄັນຕ່າງໆອື່ນ

1. **ຄະດີການຮ້ອງຟ້ອງ**
   ຮອດວັນທີ 30/06/2026, ບໍ່ມີຄະດີການຮ້ອງຟ້ອງ.
2. **ການລົງໂທດຕໍ່ຜູ້ບໍລິຫານຂັ້ນສູງຈາກພາກສ່ວນກ່ຽວຂ້ອງກັບການກວດກາຕິດຕາມ**
   ຮອດວັນທີ 30/06/2026, ບໍ່ມີການລົງໂທດຕໍ່ຜູ້ບໍລິຫານຂັ້ນສູງຈາກພາກສ່ວນກ່ຽວຂ້ອງກັບການກວດກາຕິດຕາມ.
3. **ການປ່ຽນແປງຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ອຳນວຍການໃຫຍ່**
   ຮອດວັນທີ 30/06/2026, ບໍ່ມີການປ່ຽນແປງຂອງຜູ້ຖືຮຸ້ນລາຍໃຫຍ່ ແລະ ຜູ້ອຳນວຍການໃຫຍ່
4. **ການຊື້ຮຸ້ນຂອງບໍລິສັດອື່ນ, ການຂາຍຊັບສິນຂອງບໍລິສັດ**
   ຮອດວັນທີ 30/06/2026, ບໍ່ມີການຊື້ຮຸ້ນຂອງບໍລິສັດອື່ນ, ການຂາຍຊັບສິນຂອງບໍລິສັດ
5. **ການຄ້າຂາຍມີມູນຄ່າສູງທີ່ກ່ຽວພັນເຖິງບໍລິສັດ**
   ຮອດວັນທີ 30/06/2026, ບໍ່ມີການຄ້າຂາຍມີມູນຄ່າສູງທີ່ກ່ຽວພັນເຖິງບໍລິສັດ.
6. **ສະພາບການອິດສະຫຼະພາບຂອງບໍລິສັດແມ່**
   ມີຄວາມອິດສະຫຼະດ້ານບຸກຄະລາກອນ, ດ້ານຊັບສິນ, ດ້ານບັນຊີການເງິນ, ດ້ານກິດຈະການ ແລະ ດ້ານອົງການຈັດຕັ້ງ.
7. **ການຮັບຈ້າງບໍລິສັດກວດສອບ:**
   ສືບຕໍ່ໃຊ້ບໍລິການຂອງບໍລິສັດກວດສອບເດີມໃນປີ 2026 ບໍ່ມີການປ່ຽນແປງ.
8. **ການເຊັນສັນຍາທີ່ສຳຄັນ ແລະ ການຄ້ຳປະກັນ**
   ຮອດວັນທີ 30/06/2026, ບໍ່ມີການເຊັນສັນຍາທີ່ສຳຄັນ ແລະ ການຄ້ຳປະກັນ.

ບົດລາຍງານການດຳເນີນທຸລະກິດ 6 ເດືອນຕົ້ນປີ 2026 ຂອງກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ ໄດ້ສິ້ນສຸດລົງພຽງເທົ່ານີ້.

ກຸ່ມບໍລິສັດ ທ່ອງທ່ຽວ ວັດທະນະທຳລາວ ມະຫາຊົນ

ກຸ່ມບໍລິສັດ ທ່ອງທ່ຽວວັດທະນະທຳ ລາວ ມະຫາຊົນ Lao Culture Tourism Public Group Company

ເນັຍເຫຼີຍ